ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 3171/ກປ
ນະຄອນຫຼວງວຽງຈັນ, ວັນທີ: 20 JUN 2024

# ແຈ້ງການ

**ເຖິງ:** - ທ່ານ ຫົວໜ້າ ກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ເພີ່ມທະວີປະຕິບັດມາດຕະການເກືອດຫ້າມການນຳເຂົ້າສິນຄ້າກະສິກຳທີ່ສາມາດຜະລິດໄດ້ພາຍໃນ ຢູ່ບັນດາດ່ານທ້ອງຖິ່ນ ແລະ ດ່ານປະເພນີ ຕາມແຈ້ງການ ສະບັບເລກທີ 1115/ຫສນຍ, ລົງວັນທີ 07 ມິຖຸນາ 2024.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການ ຈາກຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1115/ຫສນຍ, ລົງວັນທີ 07 ມິຖຸນາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມແຜນການ ແລະ ການຮ່ວມມື ສະບັບເລກທີ 2658/ກຜຮ, ລົງວັນທີ 19 ມິຖຸນາ 2024.

ກະຊວງກະສິກຳ ແລະ ປ່າໄມ້ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ທີ່ກ່ຽວຂ້ອງກັບພາລະບົດບາດຂອງຕົນ ໂດຍເລັ່ງໃສ່ການຊຸກຍູ້ ການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ການຜະລິດເປັນສິນຄ້າເພື່ອສົ່ງອອກ ກໍຄືການຈັດຕັ້ງປະຕິບັດ ວຽກຂອງຄະນະສະເພາະກິດ ວ່າດ້ວຍ ການແກ້ໄຂບັນຫາເຄັ່ງຮ້ອນ ດ້ານເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບ 19/ກມສພ, ລົງວັນທີ 30 ມິຖຸນາ 2023. ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ແມ່ນ ໄດ້ສຸມໃສ່ຊຸກຍູ້ສົ່ງເສີມການຜະລິດ, ພ້ອມກັນນັ້ນ ກໍ່ໄດ້ເກັບກຳຂໍ້ມູນດ້ານການຜະລິດ ແລະ ການດຸ່ນດ່ຽງສະບຽງອາຫານ ໃນທົ່ວປະເທດ ເຫັນວ່າການຜະລິດກະສິກຳໝວດສະບຽງອາຫານ ແມ່ນສາມາດຄໍ້າປະກັນໄດ້ໂດຍພື້ນຖານ ໂດຍສະເພາະແມ່ນ ເຂົ້າ, ຊີ້ນ, ປາ, ໄຂ່ ແລະ ພືດຜັກ ແລະ ສາມາດຫຼຸດຜ່ອນການນຳເຂົ້າໄດ້.

ລັດຖະບານ ຈຶ່ງໄດ້ອອກແຈ້ງການ ສະບັບເລກທີ 1115/ຫສນຍ, ລົງວັນທີ 07 ມິຖຸນາ 2024 ເຫັນດີ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ປະຕິບັດມາດຕະການເກືອດຫ້າມການນຳເຂົ້າສິນຄ້າກະສິກຳທີ່ສາມາດຜະລິດໄດ້ພາຍໃນ ຢູ່ບັນດາດ່ານທ້ອງຖິ່ນ ແລະ ດ່ານປະເພນີ, ແຕ່ອະນຸຍາດໃຫ້ນຳເຂົ້າໄດ້ ຜ່ານດ່ານສາກົນທີ່ມີດ່ານກັກກັນພືດ-ສັດເທົ່ານັ້ນ. ດັ່ງນັ້ນ ເພື່ອຈັດຕັ້ງປະຕິບັດ ແຈ້ງການສະບັບດັ່ງກ່າວ ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການ ດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເຮັດທົດລອງເກືອດຫ້າມການນຳເຂົ້າສິນຄ້າກະສິກຳທີ່ສາມາດຜະລິດໄດ້ພາຍໃນ ຢູ່ບັນດາ ດ່ານທ້ອງຖິ່ນ ແລະ ດ່ານປະເພນີ, ແຕ່ອະນຸຍາດ ໃຫ້ນຳເຂົ້າຜ່ານສະເພາະດ່ານສາກົນ ທີ່ມີລະບົບກວດກາກັກກັນພືດ-ສັດ ເທົ່ານັ້ນປະກອບມີ: 1) ເຂົ້າສານ ແລະ ເຂົ້າເປືອກທຸກຊະນິດ; 2) ປະເພດຊີ້ນ: ຊີ້ນໝູ, ຊີ້ນງົວ,



ສະແກນດ້ວຍ CamScanner

ຊີ້ນແບ້, ຊີ້ນເປັດ, ຊີ້ນໄກ່, ຊີ້ນຫ່ານ, ຊີ້ນສ່ວນ ແລະ ເຄື່ອງໃນສັດ ທຸກປະເພດ, ລວມທັງສັດມີຊີວິດ ຄື: ງົວ, ໝູ, ແບ້, ໄກ່ພັນຊີ້ນ, ໄກ່ສຸດໄຂ່, ໄກ່ລາດ, ໄກ່ສາມສາຍພັນ, ເປັດ, ຫ່ານ; 3) ໄຂ່ໄກ່; 4) ປະເພດປາ: ປານ້ຳຈືດ ແລະ ຜະລິດຕະພັນປານ້ຳຈືດທຸກຊະນິດ ລວມທັງປາແດກ; ແລະ 5) ພືດຜັກ: ພືດກິນໃບ (ຜັກກາດທຸກປະເພດ, ຜັກກະລໍ່າປີ, ຜັກສະຫຼັດ, ຜັກຫົມ, ຜັກຫອມປ້ອມ, ຜັກຊີ, ຜັກບົ້ງ, ຜັກບົ່ວໃບ, ຫອມລາບ, ຫອມເປ, ຫອມແພວ, ບົວລະພາ,ໃບຂີ້ຫູດ); ພືດກິນຫົວ (ຫົວຂີງ, ຫົວຂ່າ, ຫົວສີໄຄ, ເຜືອກ, ມັນດ້າງ, ມັນເທົາ, ມັນຕົ້ນ, ມັນສາຄູ, ຖົ່ວດິນ); ພືດກິນໝາກ (ໝາກເຂືອ, ຖົ່ວຝັກຍາວ, ຖົ່ວເບີ, ຖົ່ວແຂກ, ໝາກແຕງ, ໝາກອຶ, ໝາກນ້ຳ, ໝາກໂຕ່ນ, ໝາກເຜັດນ້ອຍ, ສາລີແອ້ ຫຼື ສາລີອ່ອນ, ໝາກໄມ, ໝາກບວບ, ໝາກແຄ້ງ, ຖົ່ວພູ).

2. ມອບໃຫ້ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ແກ້ໄຂຜົນກະທົບທີ່ຈະຕາມມາຂອງການປະຕິບັດມາດຕະການດັ່ງກ່າວ, ພ້ອມທັງຮັບມື ບໍ່ໃຫ້ມີຜົນກະທົບຕໍ່ລາຄາສິນຄ້າ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ນອກຈາກນັ້ນທ້ອງຖິ່ນ ຕ້ອງສ້າງກົນໄກການຊຸກຍູ້ສົ່ງເສີມການຜະລິດກະສິກຳ ເພື່ອສ້າງຄວາມເປັນເຈົ້າການຂອງທ້ອງຖິ່ນໃຫ້ຫຼາຍຂຶ້ນ.

3. ມອບໃຫ້ບັນດາກົມ, ສະຖາບັນ, ສູນ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເຈົ້າການ ຈັດຕັ້ງຜັນຂະຫຍາຍ, ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຄວາມຄືບໜ້າ ໃຫ້ການນຳກະຊວງຮັບຊາບ ເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

**ຮສ. ປອ ລິນຄຳ ດວງສະຫວັນ**

**ບ່ອນນຳສົ່ງ:**

1. ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ;
2. ເກັບມ້ຽນ 02 ສະບັບ.



ສະແກນດ້ວຍ CamScanner